ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ ເລກທີ 817 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 26 ສິງຫາ 2021

# ແຈ້ງການ

ເຖິງ : ທ່ານ ຫົວໜ້າຫ້ອງການ, ກົມ ແລະ ອົງການທຽບເທົ່າກົມ
ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ
ທ່ານ ອະທິການບໍດີມະຫາວິທະຍາໄລ
ທ່ານ ຜູ້ອຳນວຍການສະຖາບັນການສຶກສາຕ່າງໆ

ເລື່ອງ : ການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນ ພາຍໃນປະເທດ ສຳລັບສົກປີຮຽນ 2021-2022.

- ອີງຕາມ: ກົດໝາຍວ່າດ້ວຍການສຶກສາແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ເລກທີ 62 / ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ: ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 253/ນຍ, ລົງວັນທີ 26 ພຶດສະພາ 2020;
- ອີງຕາມ: ຍຸດທະສາດ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025, ເມສາ 2016.

ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງການມາຍັງທ່ານ ກ່ຽວກັບການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ (ຈົບ ມ. 4, ມ. 7) ແລະ ພະນັກງານ (ຜູ້ຈົບການ ສຶກສາລະດັບທຽບເທົ່າ) ເພື່ອເຂົ້າສຶກສາຕໍ່ວິຊາສະເພາະ/ວິຊາຊີບລະດັບຕ່າງໆ ຢູ່ພາຍໃນປະເທດ ສຳລັບສົກປີຮຽນ 2021-2022 ໃຫ້ປະຕິບັດເປັນເອກະພາບກັນໃນຂອບເຂດທົ່ວປະເທດດັ່ງນີ້:

## I. ນະໂຍບາຍລວມ

1. ກະຊວງສຶກສາທິການ ແລະ ກິລາ ສືບຕໍ່ຊຸກຍູ້ສົ່ງເສີມ ໃຫ້ຜູ້ທີ່ຮຽນຈົບການສຶກສາຊັ້ນປະຖົມ, ມັດທະຍົມຕອນຕົ້ນ, ຕອນປາຍ ແລະ ທຽບເທົ່າ ໄດ້ມີໂອກາດສຶກສາຕໍ່ໃນວິຊາຊີບ ແລະ ວິຊາສະເພາະ ລະດັບຕ່າງໆ ຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງ;
2. ກະຊວງສຶກສາທິການ ແລະ ກິລາ ສົ່ງເສີມຜູ້ຮຽນດີ-ຮຽນເກັ່ງ, ນັກຮຽນທີ່ມີພອນສະຫວັນ, ມີຄວາມສາມາດພິເສດ, ຜູ້ດ້ອຍໂອກາດ, ຊົນເຜົ່າ, ພິການ ແລະ ເພດຍິງ ໄດ້ມີໂອກາດເຂົ້າ ເຖິງການສຶກສາວິຊາຊີບ ແລະ ການສຶກສາຊັ້ນສູງ ດ້ວຍການອຸດໜູນເບ້ຍລ້ຽງ ແລະ ສິ່ງອຳນວຍຄວາມສະດວກ ທີ່ຈຳເປັນອື່ນໆ ຕາມຄວາມສາມາດຕົວຈິງຂອງລັດຖະບານ.

## II. ຫຼັກການລວມ

ເພື່ອປະຕິບັດຄຳສັ່ງເລກທີ 09/ນຍ ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດ, ສຳລັບສົກປີຮຽນ 2021-2022 ນີ້, ກະຊວງສຶກສາທິການ ແລະ ກິລາ ກຳນົດການແບ່ງປັນໂຕເລກນັກຮຽນ-ນັກສຶກສາ ທີ່ໄດ້ຮັບເບ້ຍລ້ຽງຂອງລັດຖະບານ, ການແບ່ງປັນໂຕເລກໃຫ້ພະນັກງານບັນດາກະຊວງ, ອົງການທຽບເທົ່າມາຮຽນຕໍ່ເນື່ອງວິຊາສະເພາະລະດັບຕ່າງໆ ໃນສະຖານການສຶກສາຂອງລັດ ດັ່ງນີ້:

1. ນະໂຍບາຍຫຼັກສຳລັບການເຂົ້າຮຽນມະຫາວິທະຍາໄລ
   1.1 ແບ່ງປັນໂຕເລກນັກຮຽນ-ນັກສຶກສາ ທີ່ໄດ້ຮັບເບ້ຍລ້ຽງຂອງລັດຖະບານ (ໃນແຜນ) ໃນ 20% ຂອງແຜນຮັບທັງໝົດ. ໃນນີ້ 10% ແມ່ນມອບໃຫ້ມະຫາວິທະຍາໄລ ຄັດເລືອກຕາມຜົນການສອບເສັງ

ເຂົ້າມະຫາວິທະຍາໄລ ແລະ 10% ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ຄັດເລືອກແບ່ງປັນໃຫ້ນັກຮຽນຕາມຜົນການຮຽນດີເດັ່ນ, ຜູ້ທີ່ມີຜົນງານດີເດັ່ນ, ນັກຮຽນເກັ່ງ, ຜູ້ທຸກຍາກ, ຊົນເຜົ່າ ແລະ ພິການ ຕາມເງື່ອນໄຂທີ່ກຳນົດໄວ້ ໃນຂໍ້ III; ຫາກຄະນະກຳມະການຄັດເລືອກຂັ້ນແຂວງ/ນະຄອນຫຼວງ ບໍ່ສາມາດຈັດສັນຕົວເລກໄດ້ຕາມຈຳນວນທີ່ແບ່ງປັນ ແມ່ນໃຫ້ມອບຕົວເລກໃນແຜນ ໃຫ້ສະຖາບັນການສຶກສາເພື່ອຄັດເລືອກເອົານັກຮຽນທີ່ສອບເສັງໄດ້ຄະແນນສູງກວ່າໝູ່ໃນວິຊານັ້ນເຂົ້າເປັນນັກຮຽນໃນແຜນ ແລະ ຕ້ອງແຈ້ງໃຫ້ກົມແຜນການ, ສສກ ຮັບຊາບ; ສ່ວນທີ່ເຫຼືອ 80% ແມ່ນຕົວເລກຈ່າຍຄ່າຮຽນ;

1.2 ສຳລັບຄະນະເສດຖະສາດ-ບໍລິຫານທຸລະກິດ ແລະ ວິຊາພາສາອັງກິດໃນຄະນະອັກສອນສາດ ແມ່ນໃຫ້ເປັນໂຕເລກຈ່າຍຄ່າຮຽນດ້ວຍຕົວເອງ, ຍົກເວັ້ນ ນັກຮຽນ-ນັກສຶກສາ ທີ່ກຳນົດໄວ້ໃນ ຂໍ້ 4 ຂອງຂໍ້ III ທີ່ສາມາດຮຽນໃນແຜນ;

1.3 ສຳລັບຄະນະສຶກສາສາດ ແມ່ນປະຕິບັດນະໂຍບາຍເອກະພາບກັນກັບ ນະໂຍບາຍການເຂົ້າຮຽນໃນສະຖາບັນສ້າງຄູ. ຍົກເວັ້ນຕົວເລກຄູອາສາສະໝັກແມ່ນມອບໃຫ້ວິທະຍາໄລຄູ 08 ແຫ່ງຈັດຕັ້ງປະຕິບັດ;

1.4 ການແບ່ງປັນໂຕເລກ (ໃນແຜນ) ໃຫ້ພະນັກງານບັນດາກະຊວງຕ່າງໆມາຮຽນຕໍ່ເນື່ອງໃນແຕ່ລະວິຊາແມ່ນບໍ່ໃຫ້ກາຍ 30% ຂອງແຜນຮັບສາຍຕໍ່ເນື່ອງທັງໝົດ ແລະ ພະນັກງານ ຈະບໍ່ໄດ້ຮັບເບ້ຍລ້ຽງ.

2. ນະໂຍບາຍຫຼັກສຳລັບການເຂົ້າຮຽນໃນສະຖາບັນສ້າງຄູ

ແບ່ງປັນໂຕເລກນັກຮຽນ-ນັກສຶກສາ ທີ່ໄດ້ຮັບເບ້ຍລ້ຽງຂອງລັດຖະບານ (ໃນແຜນ) ໃນ 20% ຂອງແຜນຮັບທັງໝົດ ໃນນີ້ 10% ຂອງຈຳນວນແຜນຮັບທັງໝົດແບ່ງປັນໃຫ້ຄູອາສາສະໝັກ ມາຮຽນລະບົບຕໍ່ເນື່ອງ, ແຕ່ຖ້າບໍ່ມີຄູອາສາສະໝັກມາຮຽນໃຫ້ໂອນເບ້ຍລ້ຽງດັ່ງກ່າວໄປໃຫ້ນັກຮຽນທີ່ສອບເສັງໄດ້ຄະແນນສູງກວ່າໝູ່ຂອງ 4 ວິຊາຫຼັກ: ຄະນິດສາດ, ເຄມີສາດ, ຟີຊິກສາດ ແລະ ພາສາລາວ-ວັນນະຄະດີ ແລະ 10% ໃຫ້ຄັດເລືອກເອົານັກຮຽນ ມ. ປາຍ ທີ່ສອບເສັງເຂົ້າຮຽນສາຍສ້າງຄູທີ່ໄດ້ຄະແນນສູງກວ່າໝູ່ໄດ້ຮັບທຶນເບ້ຍລ້ຽງຂອງລັດຖະບານ; ສ່ວນທີ່ເຫຼືອ 80% ແມ່ນຕົວເລກຈ່າຍຄ່າຮຽນ.

3. ນະໂຍບາຍຫຼັກສຳລັບການເຂົ້າຮຽນໃນສະຖານອາຊີວະສຶກສາ

3.1 ສຳລັບສະຖານອາຊີວະສຶກສາ ກຳນົດແບ່ງປັນໂຕເລກນັກຮຽນ-ນັກສຶກສາ ທີ່ໄດ້ຮັບເບ້ຍລ້ຽງຂອງລັດຖະບານ ໃນວິຊາທີ່ນອນຢູ່ໃນວິຊາສໍາພາດເຂົ້າຮຽນ ສະເລ່ຍ 40% ຂອງແຜນຮັບນັກຮຽນທັງໝົດ, ສ່ວນ 60 % ຂອງແຜນຮັບແມ່ນລວມເອົາຈຳນວນທີ່ບໍ່ໄດ້ຈ່າຍຄ່າຮຽນ ແລະ ຈ່າຍຄ່າຮຽນດ້ວຍຕົນເອງ. ການຈັດຕັ້ງປະຕິບັດການຄັດເລືອກນັກຮຽນຈົບມັດທະຍົມຕອນຕົ້ນເຂົ້າຮຽນໃນສາຍອາຊີວະສຶກສາ ແມ່ນໃຫ້ປະຕິບັດຕາມແຈ້ງການຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 3411/ສສກ ລົງວັນທີ 20 ສິງຫາ 2021;

3.2 ນັກຮຽນທີ່ໄດ້ຮັບນະໂຍບາຍໃນສາຂາວິຊາສອບເສັງ ຂອງສະຖານອາຊີວະສຶກສາ ເປັນນະໂຍບາຍບໍ່ໃຫ້ຈ່າຍຄ່າຮຽນ ແລະ ບໍ່ໄດ້ຮັບເບ້ຍລ້ຽງ ຂອງລັດຖະບານ;

3.3 ໂຕເລກນັກສຶກສາຮຽນຕໍ່ ລະດັບຊັ້ນສູງຕໍ່ເນື່ອງ ໃນສະຖານອາຊີວະສຶກສາ ແມ່ນໄດ້ຈ່າຍຄ່າຮຽນດ້ວຍຕົນເອງ;

3.4 ໂຕເລກພະນັກງານຈາກບັນດາກະຊວງຕ່າງໆມາຮຽນ ຕາມການແບ່ງປັນ ແມ່ນບໍ່ໄດ້ຈ່າຍຄ່າຮຽນ ແລະ ຈະບໍ່ໄດ້ຮັບເບ້ຍລ້ຽງ.

4. ນະໂຍບາຍຫຼັກສຳລັບການເຂົ້າຮຽນໃນສະຖາບັນກິລາ-ກາຍຍະກຳ

ແບ່ງປັນໂຕເລກນັກຮຽນ-ນັກສຶກສາ ທີ່ໄດ້ຮັບເບ້ຍລ້ຽງຂອງ ລັດຖະບານ (ໃນແຜນ) ໃນ 100% ຂອງແຜນຮັບທັງໝົດ; ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຮັບເອົານັກຮຽນຊັ້ນ ມ5 ເຂົ້າຮຽນທີ່ໂຮງຮຽນພອນສະຫວັນ ກິລາ-ກາຍຍະກຳ ປະຈຳສົກຮຽນ 2017-2018 ສະບັບເລກທີ 3425/ສສກ, ລົງວັນທີ 21 ກໍລະກົດ 2017;

5. ໃຫ້ສະຖາບັນການສຶກສາ ຮັບໂຕເລກນັກສຶກສາຮຽນຕໍ່ເນື່ອງລະດັບປະລິນຍາຕີ ບໍ່ໃຫ້ເກີນ 30% ຂອງແຜນຮັບທັງໝົດ ແລະ ຈັດຕັ້ງການຮຽນ-ການສອນໃຫ້ຈັດເຕັມເວລາ, ບໍ່ອະນຸຍາດໃຫ້ຈັດໃສ່ພາກຄໍ່າ ແລະ ວັນເສົາ-ວັນອາທິດເດັດຂາດ.
6. ການຈັດຕັ້ງປະຕິບັດຫຼັກສູດອານຸປະລິນຍາຕໍ່ເນື່ອງພັກສິ້ນປີຮຽນໃຫ້ເນັ້ນໃສ່ຫຼັກສູດບໍາລຸງເພື່ອປັບປຸງເຕັກນິກການຮຽນ-ການສອນຂອງຄູ, ການບໍລິຫານ ໂຮງຮຽນ ແລະ ພາວະຄວາມເປັນຜູ້ນໍາ ເປັນຕົ້ນ ໂດຍການປະສານ ສົມທົບ ກັນໃນການຈັດການບໍາລຸງໃຫ້ຄູ ລະຫວ່າງ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ກົມວິຊາການກ່ຽວຂ້ອງ ແລະ ສະຖາບັນການສຶກສາ ຕາມຄວາມອາດສາມາດຕົວຈິງທາງດ້ານງົບປະມານ;
7. ບໍ່ອະນຸຍາດໃຫ້ມີການປ່ຽນແທນນັກຮຽນໃນແຜນ ທີ່ແຂວງ ຫຼື ສະຖາບັນການສຶກສາຮັບຜິດຊອບແບ່ງປັນໂຕເລກໃຫ້ ທີ່ໄດ້ຮັບທຶນເບ້ຍລ້ຽງຂອງລັດຖະບານ. ຖ້ານັກຮຽນທີ່ໄດ້ຮັບທຶນເບ້ຍລ້ຽງຈາກຕົວເລກແບ່ງປັນບໍ່ມາລົງທະບຽນຕາມກໍານົດເວລາ ຫຼື ໄດ້ລົງທະບຽນແລ້ວແຕ່ບໍ່ມາຮຽນ ແມ່ນບໍ່ສາມາດປ່ຽນແທນໄດ້. ກໍລະນີດັ່ງກ່າວນີ້ ໃຫ້ຖືວ່ານັກຮຽນຜູ້ນັ້ນສະຫຼະສິດ ແລະ ສະຖາບັນການສຶກສາ ສາມາດຈັດສັນນັກຮຽນທີ່ຜ່ານການສອບເສັງເຂົ້າຕາມເກນຄະແນນສູງຖັດລົງມາ ຂອງແຂວງນັ້ນໄດ້ຮັບທຶນເບ້ຍລ້ຽງຂອງລັດຖະບານ (ໃນແຜນ) ແທນ ແລ້ວແຈ້ງໃຫ້ແຂວງຊາບ;
8. ນອກຈາກໂຕເລກການແບ່ງປັນໃຫ້ນັກຮຽນ-ນັກສຶກສາ ທີ່ໄດ້ຮັບເບ້ຍລ້ຽງຂອງລັດຖະບານ ແລະ ແບ່ງປັນໃຫ້ພະນັກງານຮຽນຕໍ່ເນື່ອງແລ້ວ ແມ່ນກໍານົດເປັນໂຕເລກຈ່າຍຄ່າຮຽນດ້ວຍຕົນເອງທັງໝົດ;
9. ການຮັບນັກຮຽນຂອງສະຖາບັນການສຶກສາພາກເອກະຊົນ ແມ່ນກໍານົດເປັນໂຕເລກຈ່າຍຄ່າຮຽນ.

## III. ເງື່ອນໄຂຜູ້ຮັບທຶນຕາມແຜນແບ່ງປັນ

1. ເກນຄະແນນ ສໍາລັບການຄັດເລືອກນັກຮຽນຂອງແຂວງ/ນະຄອນຫຼວງ ເຂົ້າຮຽນມະຫາວິທະຍາໄລມີດັ່ງນີ້:
   1.1. ຕ້ອງແມ່ນຜູ້ທີ່ມີຜົນການຮຽນດີ; ຄະແນນສອບເສັງຈົບຊັ້ນມັດທະຍົມສຶກສາຕອນປາຍສະເລ່ຍຕ້ອງແມ່ນ 7 ຂຶ້ນໄປ, ຄະແນນ ຂອງແຕ່ລະວິຊາ ບໍ່ໃຫ້ຫຼຸດ 6; ສໍາລັບການເຂົ້າຮຽນໃນລະດັບຕໍ່າກວ່າປະລິນຍາຕີ, ຄະແນນສອບເສັງຈົບຊັ້ນມັດທະຍົມສຶກສາຕອນປາຍສະເລ່ຍບໍ່ໃຫ້ຫຼຸດ 6, ຄະແນນຂອງແຕ່ ລະວິຊາບໍ່ໃຫ້ຫຼຸດ 5 ແລະ ຕ້ອງສອດຄ່ອງກັບມາດຕະຖານການສອບເສັງເຂົ້າສາຍ A, B ທີ່ມະຫາວິທະຍາໄລກໍານົດໄວ້;
   1.2. ການຄັດເລືອກເອົານັກຮຽນຜູ້ດ້ອຍໂອກາດ ມາຈາກຄອບຄົວທຸກຍາກ, ເຂດຫ່າງໄກສອກຫຼີກ (ເພດຍິງ, ຊົນເຜົ່າ, ຄົນພິການ) ຕ້ອງເປັນນັກຮຽນທີ່ມີຜົນການຮຽນດີ, ຄະແນນສອບເສັງຈົບຊັ້ນມັດທະຍົມສຶກສາຕອນປາຍ ສະເລ່ຍບໍ່ໃຫ້ຫຼຸດ 6, ຄະແນນຂອງແຕ່ລະວິຊາບໍ່ໃຫ້ຫຼຸດ 5;
   1.3. ຜູ້ທີ່ໄດ້ຮັບທຶນ ແມ່ນຕ້ອງໄປຮຽນຕາມການແບ່ງປັນຂອງແຂວງ/ນະຄອນຫຼວງ ແລະ ເມືອງນັ້ນ.

2. ເກນຄະແນນ ສໍາລັບການຄັດເລືອກນັກຮຽນຂອງມະຫາວິທະຍາໄລ ມີດັ່ງນີ້:
   2.1 ການຄັດເລືອກເອົານັກຮຽນທີ່ຈະໄດ້ຮັບທຶນເບ້ຍລ້ຽງຂອງລັດຖະບານ (ໃນແຜນ) ເຂົ້າຮຽນໃນມະຫາວິທະຍາໄລ ຕ້ອງແມ່ນຜູ້ທີ່ມີຜົນການສອບເສັງໄດ້ຄະແນນສູງກວ່າໝູ່ ຂອງແຕ່ລະແຂວງ ທີ່ສອບເສັງໄດ້ໃນແຕ່ລະວິຊາ, ການຄັດເລືອກໃຫ້ຮັບປະກັນຄວາມທົ່ວເຖິງ, ເທົ່າທຽມ ແລະ ກວມເອົາເພດຍິງ, ຊົນເຜົ່າແລະ ຄົນພິການ;
   2.2 ກໍລະນີທຶນແບ່ງປັນມີໜ້ອຍ, ແຕ່ຈໍານວນນັກຮຽນສອບເສັງໄດ້ຫຼາຍແຂວງ ໃນວິຊາໃດໜຶ່ງ ໃຫ້ມະຫາວິທະຍາໄລຈັດລຽງບຸລິມະສິດຄະແນນສູງກວ່າໝູ່ໃນຜູ້ທີ່ມີຜົນການສອບເສັງໄດ້ຄະແນນສູງສຸດຂອງແຕ່ລະແຂວງ ແລ້ວຄັດເລືອກເອົາຜູ້ທີ່ມີຄະແນນສູງກວ່າໝູ່ທີ່ຈະໄດ້ຮັບເບ້ຍລ້ຽງ.

3. ການຄັດເລືອກນັກຮຽນຂອງວິທະຍາໄລຄູ ມີດັ່ງນີ້:
   3.1 ການຄັດເລືອກເອົາຄູອາສາສະໝັກມາຮຽນລະບົບຕໍ່ເນື່ອງໃຫ້ໄປຕາມບັນຊີບຸລິມະສິດທີ່ກົມຈັດຕັ້ງ ແລະ ພະນັກງານ, ກະຊວງສຶກສາທິການ ແລະ ກິລາ ກໍານົດ;

3.2 ການຄັດເລືອກເອົານັກຮຽນທີ່ຈະໄດ້ຮັບເບ້ຍລ້ຽງຂອງລັດຖະບານເຂົ້າຮຽນສະຖາບັນສ້າງຄູ ຕ້ອງແມ່ນຜູ້ທີ່ມີຜົນການສອບເສັງໄດ້ຄະແນນສູງກວ່າໝູ່ ຂອງແຕ່ລະແຂວງ ທີ່ສອບເສັງໄດ້ໃນແຕ່ລະວິຊາ, ການຄັດເລືອກໃຫ້ຮັບປະກັນຄວາມທົ່ວເຖິງ, ເທົ່າທຽມ ແລະ ກວມເອົາເພດຍິງ, ຊົນເຜົ່າ, ຄົນພິການ;

4. ຜູ້ທີ່ຈະໄດ້ຮັບນະໂຍບາຍເປັນບູລິມະສິດພິເສດ ມີດັ່ງນີ້:

4.1 ນັກຮຽນໄດ້ປະກາສະນີຍະບັດແດງ ແລະ ນັກຮຽນເກັ່ງ ທີ 1 ຂອງແຂວງ/ນະຄອນຫຼວງ (ຜົນສອບເສັງຈົບ ມ.7) ສາມາດເລືອກຮຽນໄດ້ທຸກວິຊາ ຢູ່ທຸກມະຫາວິທະຍາໄລພາຍໃນປະເທດ, ຍົກເວັ້ນມະຫາວິທະຍາໄລວິທະຍາສາດສຸຂະພາບ ທີ່ກໍານົດຕົວເລກ, ມາດຖານ ແລະ ເງື່ອນໄຂ ສະເພາະດ້ານຂອງແຕ່ລະສາຂາວິຊາ ແລະ ຕ້ອງຜ່ານການຄັດເລືອກຂອງຄະນະກໍາມະການຄັດເລືອກສະເພາະ;

4.2 ສົກປີຮຽນ 2020-2021 ບໍ່ມີການຈັດຕັ້ງການສອບເສັງນັກຮຽນເກັ່ງລະດັບຊາດ ຄືປີຜ່ານມາ, ສະນັ້ນ, ໃຫ້ປະຕິບັດນະໂຍບາຍ ຕໍ່ນັກຮຽນເກັ່ງເຫຼົ່ານີ້ ໂດຍເອົານັກຮຽນເກັ່ງ/ເສັງໄດ້ທີ 1 ຂອງ 4 ວິຊາຫຼັກ ຂອງແຂວງ/ ນະຄອນຫຼວງ (ຄະນິດສາດ, ເຄມີສາດ, ຟີຊິກສາດ ແລະ ພາສາລາວ-ວັນນະຄະດີ) ເຂົ້າເປັນບູລິມະສິດຕື່ມ ແລະ ໄດ້ຮັບນະໂຍບາຍດຽວກັນກັບ ນັກຮຽນ ໃນຂໍ້ 4.1.

## IV. ວິທີການຄັດເລືອກ ແລະ ນໍາສົ່ງ

1. ການຄົ້ນຄວ້າເພື່ອຄັດເລືອກ ແລະ ສັບຊ້ອນຜູ້ຮຽນ ຕາມໂຕເລກແບ່ງປັນ ແມ່ນໃຫ້ດໍາເນີນການ ພາຍຫຼັງສະຖາບັນການສຶກສາຊັ້ນສູງແຫ່ງຕ່າງໆ ປະກາດຜົນການສອບເສັງ;
2. ມອບໃຫ້ ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ຄັດເລືອກເອົານັກຮຽນຕາມແຜນແບ່ງປັນ ແລະ ໃຫ້ປະຕິບັດຕາມເງື່ອນໄຂຂອງມະຫາວິທະຍາໄລ ແລະ ລະບຽບການ ທີ່ກ່ຽວຂ້ອງ ເຊິ່ງລາຍລະອຽດ ໃຫ້ປະຕິບັດຕາມແຈ້ງການຂອງກົມວິຊາການຄື: ກົມການສຶກສາຊັ້ນສູງ, ກົມສ້າງຄູ, ກົມອາຊີວະສຶກສາ, ກົມພະລະ-ສິລະປະສຶກສາ ແລະ ສະຖາບັນກິລາ-ກາຍຍະກໍາ;
3. ມອບໃຫ້ມະຫາວິທະຍາໄລ, ສະຖາບັນສ້າງຄູ ຄົ້ນຄ້ວາຄັດເລືອກນັກຮຽນ-ນັກສຶກສາ ທີ່ຈະໄດ້ຮັບ ເບ້ຍລ້ຽງຂອງລັດຖະບານຕາມໂຕເລກທີ່ກະຊວງສຶກສາທິການ ແລະ ກິລາ ແບ່ງປັນໃຫ້, ການຄັດເລືອກຕ້ອງໃຫ້ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສດ້ວຍການແບ່ງປັນໃຫ້ນັກຮຽນຈາກທຸກແຂວງ ໂດຍອີງຕາມຜົນການສອບເສັງໄດ້ຄະແນນສູງກວ່າໝູ່ຂອງແຕ່ລະແຂວງຕາມເຂດບໍລິການ, ພາຍຫຼັງຄັດເລືອກແລ້ວໃຫ້ແຈ້ງບັນຊີລາຍຊື່ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ;
4. ມອບໃຫ້ສະຖານອາຊີວະສຶກສາ ສົມທົບກັບພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ເປັນເຈົ້າການໃນການຄັດເລືອກ, ແບ່ງປັນ, ສັບຊ້ອນນັກຮຽນເຂົ້າຮຽນໃນຫຼັກສູດວິຊາຊີບ ລະດັບຕ່າງໆ;
5. ມອບໃຫ້ສະຖາບັນກິລາ-ກາຍຍະກໍາ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງເປັນເຈົ້າການໃນການຄັດເລືອກ, ແບ່ງປັນສັບຊ້ອນນັກຮຽນເຂົ້າຮຽນ ຕາມໂຕເລກທີ່ກະຊວງສຶກສາທິການ ແລະ ກິລາ ແບ່ງປັນໃຫ້;
6. ສໍາລັບພະນັກງານທີ່ຈະເຂົ້າຮຽນໃນລະດັບຕໍ່ເນື່ອງໃຫ້ປະຕິບັດຕາມເງື່ອນໄຂຂອງສະຖາບັນການສຶກສາ ແລະ ອີງການຈັດຕັ້ງທີ່ກ່ຽວຂ້ອງ;
7. ສໍາລັບການເຂົ້າຮຽນຕາມສະຖາບັນການສຶກສາຕ່າງໆ ທີ່ຂຶ້ນກັບຂະແໜງການອື່ນ ແມ່ນມອບໃຫ້ສະຖາບັນການສຶກສາ ສົມທົບກັບກົມກ່ຽວຂ້ອງ ກໍານົດວິທີການ ແລະ ໄລຍະເວລາໃນການສອບເສັງ ພ້ອມທັງແຈ້ງໃຫ້ທົ່ວສັງຄົມຮັບຮູ້ຢ່າງກວ້າງຂວາງ ແລ້ວລາຍງານຜົນການຈັດຕັ້ງປະຕິບັດໃຫ້ກະຊວງສຶກສາທິການ ແລະ ກິລາ ຊາບ.
8. ວິທີການນໍາສົ່ງ ໃຫ້ປະຕິບັດດັ່ງນີ້:

8.1 ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ສະຖາບັນການສຶກສາແຕ່ງຕັ້ງ ຄະນະຮັບຜິດຊອບປະສານງານກ່ຽວກັບວຽກງານການແບ່ງປັນສັບຊ້ອນຂອງແຕ່ລະພາກສ່ວນ ແລ້ວແຈ້ງຜູ້ປະສານງານຫຼັກຂອງຕົນໃຫ້ກັນຊາບ ເພື່ອອໍານວຍຄວາມສະດວກ ແລະ ໃຫ້ມີຄວາມຄ່ອງຕົວທາງດ້ານ

ການປະສານງານ, ແກ້ໄຂບັນຫາໃຫ້ທັນສະພາບການ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດ ພ້ອມທັງຊຸກຍູ້, ສົ່ງເສີມໃຫ້ນັກຮຽນ-ພະນັກງານເຂົ້າຮຽນຕາມແຜນທີ່ກຳນົດໄວ້;

8.2 ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ເຮັດບັນຊີລາຍຊື່ລະອຽດຂອງນັກຮຽນທີ່ໄດ້ຮັບເບ້ຍລ້ຽງຕາມແຜນແບ່ງປັນ, ພ້ອມທັງອອກໃບນຳສົ່ງ ແລະ ໃຫ້ພວກກ່ຽວໄປສະເໜີ ໂຕກັບສະຖາບັນການສຶກສາທີ່ພວກກ່ຽວໄດ້ຮັບທຶນໂດຍກົງ ແລ້ວສົ່ງສຳເນົາໃຫ້ກົມແຜນການເພື່ອຊາບ;

8.3 ໃຫ້ກົມສາມັນສຶກສາ ສັງລວມບັນຊີລາຍຊື່ ແລະ ວິຊາຮຽນຂອງນັກຮຽນເກັ່ງ/ເສັງໄດ້ທີ 1 ຂອງ 4 ວິຊາຫຼັກຂອງແຂວງ/ນະຄອນຫຼວງ, ນັກຮຽນໄດ້ໃບປະກາສະນິຍະບັດແດງ, ປະກອບເອກະສານຄົບຊຸດ ພ້ອມທັງດຳເນີນການ ນຳສົ່ງ ແລະ ໃຫ້ພວກກ່ຽວໄປສະເໜີໂຕກັບສະຖາບັນການສຶກສາທີ່ພວກ ກ່ຽວສະເໜີຮຽນໂດຍກົງ ແລ້ວສົ່ງສຳເນົາໃຫ້ກົມແຜນການເພື່ອຊາບ;

8.4 ສຳລັບການນຳສົ່ງພະນັກງານໄປຮຽນຕໍ່ ແມ່ນໃຫ້ປະຕິບັດຕາມລະບຽບຫຼັກການຂອງກະຊວງພາຍໃນ, ສະຖາບັນການສຶກສາທີ່ໄດ້ຮັບທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

8.5 ຄ່າເດີນທາງ ແລະ ນະໂຍບາຍຕ່າງໆໃນການນຳສົ່ງນັກຮຽນ-ພະນັກງານ ໃນໄລຍະການເດີນທາງ ແມ່ນໃຫ້ແຂວງຮັບຜິດຊອບທັງໝົດ. ສ່ວນການຄິດໄລ່ເບ້ຍລ້ຽງ ແລະ ນະໂຍບາຍອື່ນໆ ແມ່ນໃຫ້ ປະຕິບັດຕາມລະບຽບຫຼັກການຂອງການເງິນ;

8.6 ໃຫ້ກົມວິຊາການກ່ຽວຂ້ອງ ຂອງກະຊວງສຶກສາທິການ ແລະ ກິລາ ແລະ ບັນດາກະຊວງ, ອົງການທຽບເທົ່າກະຊວງ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສົມທົບກັບສະຖາບັນການສຶກສາທາງດ້ານວັນທີ, ເວລາ ແລະ ວິທີການໃນການຈັດສົ່ງນັກຮຽນຕົວຈິງ.

## V. ການສະຫຼຸບລາຍງານ

1. ໃຫ້ກົມວິຊາການກ່ຽວຂ້ອງ ຂອງກະຊວງສຶກສາທິການ ແລະ ກິລາ ແລະ ບັນດາກະຊວງ, ອົງການ ທຽບເທົ່າກະຊວງ, ລາຍງານການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສຳລັບສົກປີຮຽນ 2021-2022 ໃຫ້ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ພາຍຫຼັງສຳເລັດການສັບຊ້ອນແລ້ວ ທ້າຍເດືອນ ຕຸລາ 2021;
2. ສຳລັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ໃຫ້ສັງລວມ-ລາຍງານຜົນການສັບ ຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົ່ງເຖິງກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ພາຍໃນເດືອນ ພະຈິກ 2021.
3. ໃຫ້ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ລາຍງານສະພາບການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນ ພາຍໃນປະເທດ ສຳລັບສົກປີຮຽນ 2021-2022 ໃຫ້ຄະນະ ນຳກະຊວງສຶກສາທິການ ແລະ ກິລາ ຊາບບໍ່ໃຫ້ກາຍ ເດືອນທັນວາ 2021;

ພາຍຫຼັງທີ່ໄດ້ຮັບແຜນແບ່ງປັນແລ້ວ ໃຫ້ຄະນະກຳມະການສອບເສັງລະດັບຊາດ, ລະດັບສະຖາບັນ, ຄະນະກຳມະການຄັດເລືອກສັບຊ້ອນນັກຮຽນ-ພະນັກງານ ຂັ້ນແຂວງ-ຂັ້ນເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ

<u>ບ່ອນສົ່ງ:</u>

- ທຸກພາກສ່ວນທີ່ກ່ຽວຂ້ອງ ບ່ອນລະ 1 ສະບັບ
- ເກັບມ້ຽນ 3 ສະບັບ